ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສໍານັກງານນາຍົກລັດຖະມົນຕີ — ເລກທີ 10 /ນຍ.

ນະຄອນຫຼວງວຽງຈັນ, ວັນທີ 13.01.2006

# ດໍາລັດ

## ຂອງ ນາຍົກລັດຖະມົນຕີ

## ວ່າດ້ວຍການໂອນເອົາເມືອງທ່າໂທມ ໃຫ້ຂຶ້ນກັບອົງການປົກຄອງແຂວງ ຊຽງຂວາງ ແລະ ເມືອງໄຊສົມບູນ ໃຫ້ຂຶ້ນກັບອົງການປົກຄອງແຂວງວຽງຈັນ

- ອີງຕາມມາດຕາ 75 ໝວດທີ 8 ຂອງລັດຖະທໍາມະນູນ.
- ອີງຕາມມະຕິຕົກລົງ ຂອງກົມການເມືອງສູນກາງພັກ ວ່າດ້ວຍການປັບປຸງການຈັດຕັ້ງ ຂອງເຂດພິເສດໄຊສົມບູນ ສະບັບເລກທີ 13/ກມສພ, ລົງວັນທີ 13 ມັງກອນ 2006.
- ອີງຕາມກົດໝາຍ ວ່າດ້ວຍການປົກຄອງທ້ອງຖິ່ນ ແຫ່ງ ສປປ ລາວ ສະບັບເລກທີ 03/ສພຊ, ລົງວັນທີ 21 ຕຸລາ 2003.

**ນາຍົກລັດຖະມົນຕີ ອອກດໍາລັດ :**

ມາດຕາ 1 : ຍຸບເຂດພິເສດໄຊສົມບູນ ແລະ ຄະນະຮັບຜິດຊອບເຂດພິເສດໄຊສົມບູນ.

ມາດຕາ 2: ໂອນເອົາເມືອງທ່າໂທມ ມີເນື້ອທີ່ປະມານ 1607 ກິໂລຕາແມັດ, ມີ 29 ບ້ານ, ພົນລະເມືອງປັດຈຸບັນ ມີ 10.728 ຄົນ, ຍິງ3.245 ຄົນ ໃຫ້ຂຶ້ນກັບການຄຸ້ມຄອງ ຂອງອົງການປົກຄອງແຂວງຊຽງຂວາງ ແລະ ໂອນເມືອງໄຊສົມບູນ ມີເນື້ອທີ່ປະມານ 3.303 ກິໂລຕາແມັດ,ມີ 56 ບ້ານ, ພົນລະເມືອງປັດຈຸບັນມີ 26.545 ຄົນ, ຍິງ 13.075 ຄົນ ໃຫ້ຂຶ້ນກັບການຄຸ້ມຄອງ ຂອງອົງການປົກຄອງແຂວງ ວຽງຈັນ.

ມາດຕາ 3 : ໃຫ້ຄະນະຮັບຜິດຊອບດໍາເນີນການ ມອບ-ໂອນ ເຂດພິເສດໄຊສົມບູນ ສໍາຫລວດ ແລະ ຂຶ້ນບັນຊີຈໍານວນພົນລະເມືອງ, ຊັບສິນບັດ ແລະ ບັນດາໂຄງການຕ່າງໆ ຂອງລັດ ທີ່ຕັ້ງຢູ່ໃນເມືອງໄຊສົມບູນ ແລ້ວມອບໃຫ້ອົງການປົກຄອງແຂວງວຽງຈັນ ເປັນຜູ້ຄຸ້ມຄອງ ແລະ ເມືອງທ່າໂທມ ແລ້ວມອບໃຫ້ອົງການປົກຄອງແຂວງຊຽງຂວາງ ເປັນຜູ້ຄຸ້ມຄອງ.

ມາດຕາ 4 : ມອບໃຫ້ຄະນະຈັດຕັ້ງສູນກາງພັກ ແລະ ທະບວງການປົກຄອງ ແລະ ຄຸ້ມຄອງລັດຖະກອນ ເປັນໃຈກາງປະສານງານ ກັບອົງການປົກຄອງແຂວງວຽງຈັນ, ແຂວງຊຽງຂວາງ, ເຂດພິເສດໄຊສົມບູນ ແລະ ບັນດາອົງການຈັດຕັ້ງທີ່ກ່ຽວຂ້ອງ ເພື່ອຈັດພິທີມອບໂອນໃນເວລາອັນຄວນ.

<u>ມາດຕາ 5</u> : ດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ປ່ຽນແທນ ດຳລັດສະບັບເລກທີ 380/ນຍ, ລົງວັນທີ 22 ທັນວາ 2005.

ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ

ບົວສອນ ບຸບຜາວັນ